# ຕາຕະລາງ ເປົ້າໝາຍ ການປະຕິບັດງານ ດ້ານການບໍລິການ ແລະ ລະດັບການບໍລິການນ້ຳປະປາ

| ລ/ດ | ຕົວຊີ້ບອກ ລະດັບ ຂອງ ການບໍລິການ | ລະດັບ, ມາດຕະຖານ ການບໍລິການ ໃຫ້ແກ່ລູກຄ້າ | ວິທີການຈັດຕັ້ງປະຕິບັດ ກ່ຽວກັບ ການບໍລິການ | ເປົ້າໝາຍ ການປະຕິບັດງານ | ເປົ້າໝາຍ ການປະຕິບັດ ງານໄລຍະກາງ (ຈຳນວນປີ) | ເປົ້າໝາຍ ການ ປະຕິບັດງານ ໄລຍະ ຍາວ (ຈຳນວນປີ) |
|---|---|---|---|---|---|---|
| SI.1 | ການຄວບຄຸມ ພື້ນທີ່ບໍລິການ | ຜູ້ດຳເນີນທຸລະກິດ ນ້ຳປະປາ ຕ້ອງ ຕິດຕັ້ງນ້ຳປະປາ ໃຫ້ແກ່ຜູ້ທີ່ໄດ້ສະ ເໜີຂໍຕິດຕັ້ງນ້ຳປະປາທັງໝົດ ຢູ່ໃນ ພື້ນທີ່ ບໍລິການ ທີ່ຕົນຮັບຜິດຊອບ, | ຈຳນວນໝໍ້ແທກນ້ຳ, ປະເພດຄົວ ເຮືອນທີ່ໄດ້ຕິດຕັ້ງ, ຈຳນວນຄົວ ເຮືອນ ໃນພື້ນທີ່ບໍລິການ, | ຜູ້ດຳເນີນທຸລະກິດ ນ້ຳປະປາ ຕ້ອງຕິດຕັ້ງນ້ຳປະປາໃຫ້ໄດ້ 80% ຂອງ ຄົວເຮືອນ ໃນພື້ນ ທີ່ບໍລິການ ຂອງຕົນ, | ອີງໃສ່ ແຜນການ, ປະຕິບັດ ຕາມລະບຽບການ ກ່ຽວກັບ ການສ້າງແຜນທີ່ ພື້ນທີ່ບໍ ລິການ | |
| SI.2 | ຄຸນນະພາບ ນ້ຳປະປາ | ເນື້ອໃນ ແລະ ມາດຕະຖານ ກ່ຽວກັບ ການຕິດຕາມຄຸ້ມຄອງຄຸນນະພາບນ້ຳແມ່ນອີງຕາມ ຂໍ້ຕົກລົງ ຂອງ ລັດຖະມົນຕີ ວ່າການ ກະຊວງສາທາ, ສະບັບເລກທີ 1371/ກຊສ, ລົງວັນທີ 04 ຕຸລາ 2005, ວ່າດ້ວຍການຄຸ້ມຄອງ ຄຸນນະພາບນ້ຳດື່ມ ແລະ ນ້ຳໃຊ້ ໃນຄົວເຮືອນ, | | | | |
| SI.3 | ຊົ່ວໂມງບໍລິການ | ຜູ້ດຳເນີນທຸລະກິດນ້ຳປະປາ ຕ້ອງ ຮັບປະກັນ ການສະໜອງນ້ຳປະປາ ຢ່າງຕໍ່ເນື່ອງ ໃຫ້ແກ່ ລູກຄ້າ ໃນພື້ນທີ່ ບໍລິການ ຂອງຕົນ, | ອ່ານ ແລະ ບັນທຶກ ຂໍ້ມູນ ຈາກ ໝໍ້ ແທກນ້ຳ ລວມ (ໃຫຍ່ ) ຂອງແຕ່ ລະຈຸດ ຫລື ແຕ່ລະເຂດທີ່ສຳ ຄັນ ຂອງ ຕາຂ່າຍການບໍລິການ, | ຜູ້ດຳເນີນທຸລະກິດນ້ຳປະປາ ຕ້ອງ ໃຫ້ການບໍລິການນ້ຳ ປະປາໃຫ້ແກ່ລູກຄ້າ ຂອງຕົນ ຕະຫລອດ 24 ຊົ່ວໂມງ, | | |
| SI.4 | ແຮງດັນນ້ຳ ຢູ່ໃນລະ ບົບ ຕາຂ່າຍ ນ້ຳປະປາ | ແຮງດັນນ້ຳ ຕ່ຳສຸດໃຫ້ໄດ້ 10 ແມັດ ຢູ່ ກ໊ອກນ້ຳປາຍທາງ, | ວັດແທກເອົາ ຢູ່ກ໊ອກນ້ຳສຸດທ້າຍ ຂອງຕາຂ່າຍການບໍລິການ, | ແຮງດັນຕ່ຳສຸດໃຫ້ໄດ້ຢ່າງຕ່ຳ 90% ຂອງມາດຕະຖານ ຂອງ ການ ບໍລິການ, | | |
| SI.5 | ການສະໜອງນ້ຳປະປາ ແບບບໍ່ຕໍ່ເນື່ອງ | ຜູ້ດຳເນີນທຸລະກິດ ນ້ຳປະປາ ຕ້ອງ ພະຍາຍາມຫຼີກລ້ຽງ ການສະໜອງ ນ້ຳປະປາ ໃຫ້ແກ່ລູກຄ້າແບບບໍ່ຕໍ່ ເນື່ອງຍ້ອນການ ສ້ອມແປງ ແລະ ການບົວລະບັດ ຮັກສາ ລະບົບທໍ່ ແລະ ສາຍເຫດອື່ນໆ ຂອງຕົນ, | ຕ້ອງສ້າງປຶ້ມບັນທຶກ, ແຈ້ງການ ລ່ວງໜ້າ ກ່ຽວກັບຈຳນວນຄັ້ງແລະ ການງົດ ການສະໜອງນ້ຳ ແລະ ຈຳນວນໝໍ້ແທກນ້ຳທີ່ຈະໄດ້ ຮັບຜົນກະທົບ ໃນ ໄລຍະເວລາ ທີ່ ຈະງົດໃຫ້ການບໍລິການແຕ່ລະຄັ້ງ, | ບົວລະບັດ ຮັກສາ ຢ່າງ ສະໝ່ຳ ສະເໝີ ແລະ ປົກກະຕິ, ດຳ ເນີນການ ສ້ອມແປງໃນເວລາກາງຄືນ ຫຼືເວລາທີ່ ເໝາະ ສົມ, ໂດຍມີການແຈ້ງ ການ ລ່ວງໜ້າ ເຖິງລູກຄ້າ ທີ່ຈະ ໄດ້ຮັບຜົນກະທົບ, ເວັ້ນເສຍ ແຕ່ການ ສ້ອມແປງທີ່ ເກີດ ຂຶ້ນໂດຍ ບັງເອີນ ເຊິ່ງຈະ | | |

| | | | | | | |
|---|---|---|---|---|---|---|
| | | | | ຕ້ອງໄດ້ດຳເນີນ ການສ້ອມ ແປງ ໂດຍດ່ວນ. | | |
| SI 6 | ການສ້າງໃບເກັບເງິນ ສຳລັບ ການບໍລິການ ແລະ ການອ່ານ ໝໍ້ ແທກນ້ຳ | ການສ້າງໃບເກັບເງິນ ປະຈຳ ເດືອນ ສຳລັບ ລູກຄ້າ ໃຫ້ ອີງໃສ່ ການບໍ ລິ ໂພກ,ອ່ານທຸກໝໍ້ແທກນ້ຳ ໃຫ້ຊັດເຈນ ໃນແຕ່ລະເດືອນ ຕາມທີ່ ຜູ້ດຳ ເນີນ ທຸລະກິດນ້ຳປະປາໄດ້ຕິດຕັ້ງ. | ບັນທຶກ ການອ່ານໝໍ້ແທກນ້ຳ ປະ ຈຳເດືອນ ແລະ ໃບເກັບເງິນ ທີ່ໄດ້ ອອກໃຫ້ໃນແຕ່ລະເດືອນ ພ້ອມ ທັງບັນທຶກ ການປັບປຸງ ໝໍ້ແທກ ນ້ຳຕາມປົກກະຕິ. | ຈຳນວນລູກຄ້າ ທີ່ໄດ້ ຕິດຕັ້ງ ຕໍ່ນ້ຳ ແລະ ອ່ານໝໍ້ແທກນ້ຳ ໃຫ້ໄດ້100% ຂອງລູກຄ້າ ແລ້ວຈຶ່ງອອກໃບເກັບເງິນ ໃນ ແຕ່ລະເດືອນ. | | |
| SI 7 | ຜົນການປະຕິບັດງານ ດ້ານກະແສເງິນສົດ. | ສ້າງ ແລະ ເກັບຮັກສາບັນຊີໜີ້ຕ້ອງ ຮັບ ແລະ ບັນທຶກ ກ່ຽວກັບ ການຕັດ ໜີ້ສູນຈາກບັນຊີຂອງຜູ້ດຳເນີນ ທຸລະກິດ ນ້ຳປະປາ ຊຶ່ງໄດ້ຮັບ ຮອງໂດຍຫ້ອງການດັດ ສົມດັດສົມນ້ຳ ປະປາ. | ບັນທຶກ ຈຳນວນເງິນທີ່ຄ້າງຊຳລະ ຂອງແຕ່ລະໄລຍະ ຢ່າງສະໝ່ຳສະ ເໝີ ໂດຍສົມທຽບໃສ່ຈຳນວນເງິນ ຢູ່ໃນໃບເກັບເງິນ ແຕ່ລະເດືອນ, ການປະຕິບັດຕາມລະບຽບການ ບັນຊີ ແລະ ການເກັບຮັກສາ ບົດ ບັນທຶກໄວ້, ຕ້ອງໄດ້ແຍກປະເພດ ບັນຊີ ຢູ່ ໃນລະບົບ ບັນຊີ. (ໃບສະຫຼູບ ຊັບສົມບັດ) | ເປົ້າໝາຍທຳອິດ: ບັນຊີໜີ້ ຕ້ອງຮັບໃຫ້ຕ່ຳກວ່າ 90 ວັນ ຂອງຕົວເລກ ທຸລະກິດຍອດ ຂາຍ ນ້ຳສະ ເລ່ຍ. ເປົ້າໝາຍທີສອງ: ໃຫ້ ຕ່ຳກວ່າ 45 ວັນ ຂອງ ຍອດຂາຍນ້ຳສະເລ່ຍ. ໜີ້ສິນທັງໝົດ ທີ່ໄດ້ ກຳນົດ ແລະ ຮັບຮອງວ່າ ເປັນໜີ້ ສູນ ຕ້ອງໄດ້ ຕັດອອກ ຈາກ ບັນຊີ ແຕ່ລະປີ. | | |

| | | | | | | |
|---|---|---|---|---|---|---|
| SI 8 | ການຕິດຕໍ່ພົວພັນກັບ ລູກຄ້າ ໃຫ້ອີງຕາມ ບົດແນະນໍາ ຂອງ ຫ້ອງການດັດສົມ ນໍ້າປະປາ ກ່ຽວກັບ ການ ຕິດຕໍ່ພົວພັນ ລະຫວ່າງ ລູກຄ້າ ແລະຜູ້ດໍາເນີນ ທຸລະກິດນໍ້າປະປາ | ຜູ້ດໍາເນີນທຸລະກິດນ້ໍາປະປາຕ້ອງ ດໍາ ເນີນການແກ້ໄຂ ກ່ຽວກັບ ຄໍາສະເໜີ ແລະ ຄໍາຕໍານິ ຕິຊົມ ຂອງ ລູກ ຄ້າ ຕາມຄວາມເໝາະສົມ. | ຜູ້ດໍາເນີນທຸລະກິດນ້ໍາປະປາ ຕ້ອງ ລົງທະບຽນ ກ່ຽວກັບ ຄໍາສະ ເໜີ ແລະ ບັນທຶກ ຂໍ້ຂ້ອງໃຈ ຂອງ ລູກຄ້າ ທັງໝົດທີ່ຕົນໄດ້ຮັບ. | ໄລຍະເວລາ ໃຫ້ ຄໍາຕອບ:<br>- ຕໍ່ ຂໍ້ຂ້ອງໃຈ ກ່ຽວກັບ ຄຸນ ນະພາບນ້ໍາ ໃຫ້ ຕອບທັນທີ<br>- ການອະທິບາຍ ກ່ຽວກັບໃບ ເກັບເງິນ ບໍ່ໃຫ້ກາຍ 1ອາທິດ<br>- ການອະທິບາຍ ກ່ຽວ ກັບໝໍ້ ແທກນ້ໍາ ບໍ່ໃຫ້ກາຍ 2 ອາທິດ<br>- ການຕິດຕັ້ງຕໍ່ນ້ໍາໃໝ່ ທີ່ໄດ້ ຊໍາລະເງິນແລ້ວ ບໍ່ໃຫ້ກາຍ 3 ອາທິດ<br>- ບັນດາ ຄໍາຕໍານິຕິຊົມ ຂອງ ລູກຄ້າ ຕ້ອງໄດ້ຮັບການແກ້ ໄຂຢ່າງຕໍ່າປະມານ 70% ພາຍໃນ 2ອາທິດ ແລະ 90% ຕ້ອງໄດ້ ຮັບການແກ້ ໄຂ ພາຍໃນ 3 ອາທິດ<br>- ຖ້າເປັນໄປໄດ້ ຄໍາສະເໜີ ຕ່າງໆ ຕ້ອງໄດ້ຮັບການແກ້ ໄຂໃຫ້ສໍາເລັດ ໃນລະດັບ ຂອງ ຜູ້ດໍາເນີນທຸລະກິດນ້ໍາ ປະປາ. | | |
| SI 9 | ການຄວບຄຸມ ແລະ ຫລຸດຜ່ອນ ນ້ໍາສູນເສຍ | ຜູ້ດໍາເນີນທຸລະກິດນ້ໍາປະປາຕ້ອງ ຄວບ ຄຸ້ມນ້ໍາສູນເສຍ ສໍາລັບຕົວເມືອງໃຫ່ຍ ສູງສຸດບໍ່ໃຫ້ເກີນ 25%, ສໍາລັບຕົວ ເມືອງນ້ອຍ ສູງສຸດບໍ່ໃຫ້ເກີນ 15% | ຜູ້ດໍາເນີນທຸລະກິດນ້ໍາປະປາ ຕ້ອງ ແຕ່ງຕັ້ງໜ່ວຍງານເຕັກນິກ ສໍາລັບ ຕິດຕາມ ແລະສ້ອມແປງສະ ເພາະ ເພື່ອ ຕິດຕາມ, ສ້ອມແປງ | | | |

| | | | | | | |
|---|---|---|---|---|---|---|
| | | | ໃຫ້ທອງ ທັນກັບ ເວລາ. | | | |